# ຄຸນນະທັມຂອງ ໂຮງຮຽນຫຼວງໃນຣັດ NSW

## Values in NSW public schools

### ຂໍ້ມູນຣາຍລະອຽດສໍາລັບພໍ່ແມ່

Information for
parents and
carers

ຈາກຖແລງການຂອງຣັຖມົນຕຣີ ທີ່
https://www.det.nsw.edu.au/policies/
student_serv/student_welfare/valu_scool/pd_05131_Values.pdf

NEW SOUTH WALES
DEPARTMENT
OF EDUCATION
AND TRAINING

Lao

# ວິທີການ ຂອງຣັດ NSW ໃນການນຳໄປສູ່ຄຸນນະທັມ ແລະ ຮູ້ຄຸນຄ່າດ້ານການສຶກສາໃນໂຮງຮຽນຫຼວງ

## ທັສນະຄຸນນະທັມ

ໂຮງຮຽນຫຼວງຂອງຣັດ NSW ໄດ້ຍຶດຖືໃນການສິດສອນຄຸນນະທັມຊຶ່ງອີງໃສ່ກົດໝາຍ, ປະເພນີແລະ ຄວາມຫ່ວງໃຍຕໍ່ຄົນອື່ນໃນສັງຄົມຂອງເຮົາ.

ໂຮງຮຽນໃນຣັດ NSW ມີໜ້າທີຮັບຜິດຊອບ ຮ່ວມກັບບັນດາຄອບຄົວແລະຊຸມຊົນໃນການ ສິດ ສອນຄຸນນະທັມ. ເຖິງວ່າຄຸນນະທັມຈະແມ່ນສິ່ງທີ່ ຮຽນຮູ້ພາຍໃນບ້ານເປັນຫຼັກໃຫຍ່ແລະມີການປ່ຽນແປງໂດຍຜ່ານຄວາມສຳພັນແລະຈາກປະສົບການຊີວິດກໍຕາມ, ແຕ່ວ່າພໍ່ແມ່ແລະຊຸມຊົນກໍຄາດຫວັງ ຢ່າງສູງວ່າໂຮງຮຽນຈະສິດສອນຄຸນນະທັມຢ່າງ ດຽວກັນ.

ການສະແດງອອກເຖິງຄຸນນະທັມໃນທຸກພາກສ່ວນຂອງການສຶກສາພາກຣັດ ແມ່ນເປັນທັງຈຸດປະສົງ ແລະ ເປັນບັນທັດຖານວັດແທກຄວາມສຳເຣັດ ສຳລັບ ບັນດາ ໂຮງຮຽນຫຼວງທົ່ວໄປ.

## ຮູ້ຄຸນຄ່າດ້ານການສຶກສາ

ບັນດາໂຮງຮຽນຫຼວງໄດ້ສິດສອນຄຸນນະທັມ, ຮວມທັງ ຄຸນຄ່າທີ່ເສີມສ້າງຮາກຖານການຮຽນ. ນອກນີ້ ທາງ ໂຮງຮຽນຫຼວງຍັງເປີດໂອກາດໃຫ້ນັກ ຮຽນໄດ້ຄົ້ນຄວ້າ ເບິ່ງຄຸນຄ່າທີ່ຢູ່ພາຍໃຕ້ທັສນະຄະຕິອັນແຕກຕ່າງ ກັນໄປ ຂອງຊຸມຊົນກ່ຽວກັບເຣື່ອງແນວຄິດການເມືອງ ແລະ ບັນຫາສັງຄົມ.

ການສອນຄຸນນະທັມແມ່ນສອນຢ່າງຊັດແຈ້ງຢູ່ໃນຫ້ອງຮຽນແລະຜ່ານກິຈກັມແລະຄວາມສຳພັນລະຫວ່າງໂຮງຮຽນແລະຊຸມຊົນຂອງຕົນ. ໃນໂຮງຮຽນ, ຄຸນນະທັມພື້ນຖານໄດ້ສິດສອນວິທີໃຫ້ຄົນສື່ສານກັນ, ເຮັດວຽກຮ່ວມກັນແລະທຳການ ຕັດສິນໃຈ ໃນສິ່ງຕ່າງໆ. ສິ່ງເຫຼົ່ານີ້ສະທ້ອນໃຫ້ເຫັນເຖິງນະໂຍບາຍ ແລະກົດລະບຽບຂັ້ນຕອນຂອງບັນດາໂຮງຮຽນຕ່າງໆແລະຂອງກະຊວງ.

## ຄຸນນະທັມພື້ນຖານ

ຣັຖບານໄດ້ຮັບຮູ້ເຖິງຄວາມສຳຄັນຂອງຄຸນນະທັມດັ່ງຂ້າງລຸ່ມນີ້ຕໍ່ຊຸມຊົນ. ຄຸນນະທັມເຫຼົ່ານີ້ສະແດງເຖິງຄວາມປາຖນາແລະຄວາມເຊື່ອຖືຂອງຊຸມຊົນອອສເຕຣລຽນທັງໝົດຮ່ວມກັນ, ຊຶ່ງຮວມມີ ຄວາມສົນໃຈໃນເຣື່ອງຄວາມທ່ຽງທັມ, ຄວາມດີເດັ່ນ ແລະການສົ່ງເສີມໃຫ້ມີສັງຄົມທີ່ຫ່ວງໃຍ, ມີມາຣະຍາດແລະເປັນທັມ. ຄຸນນະທັມເຫຼົ່ານີ້ຈະຄ້າຍຄືກັນຈາກທາງໂລກ ແລະທາງ ສາສນາໂດຍທົ່ວໄປແລະຈະ ເຫັນໄດ້ຈາກບັນດາ ວັທນະທັມ ສ່ວນໃຫຍ່.

ຄຸນນະທັມພື້ນຖານມີຄື:

| | |
|---|---|
| ຄວາມສົມບູນຄົບຖ້ວນ | ເປັນຄົນທີ່ຊື່ສັດແລະໄວ້ເນື້ອເຊື່ອໃຈໄດ້ຢ່າງສເມີຕົ້ນສເມີປາຍ. |
| ຄວາມດີເດັ່ນ | ບຸກບືນໃຫ້ໄດ້ຮັບຄວາມສຳເຣັດສ່ວນຕົວຢ່າງສູງສຸດ ໃນທຸກດ້ານຂອງການຮ່ຳຮຽນແລະໃນຜົນງານສ່ວນຕົວ ແລະໃນຊຸມຊົນ, ໃນຜົນງານການເຮັດ ວຽກ ແລະຊອກ ຮຽນຮູ້ຕລອດຊົ່ວຊີວິດຂອງຕົນ. |
| ຄວາມນັບຖຸ | ນັບຖືຕົນເອງແລະຄົນອື່ນ, ນັບຖືອຳນາດການປົກຄອງ ທີ່ທ່ຽງທັມແລະຖືກຕ້ອງຕາມກົດໝາຍ ແລະນັບຖືຄວາມ ແຕກຕ່າງອັນຫຼາກຫຼາຍໃນສັງຄົມອອສເຕຣລຽນ ແລະ ຮັບຮູ້ ສິດທິຂອງຄົນອື່ນໃນການມີຄວາມຄິດເຫັນທີ່ ແຕກຕ່າງ ຫຼືຄັດຄ້ານຕໍ່ຄວາມຄິດເຫັນຂອງຕົນ. |
| ຄວາມຮັບຜິດຊອບ | ມີການກະທຳທີ່ຮັບຜິດຊອບຕໍ່ຕົນເອງແລະສັງຄົມ, ຕໍ່ຄົນອື່ນ ແລະ ຕໍ່ສິ່ງແວດລ້ອມ. |
| ຄວາມຮ່ວມໄມ້ຮ່ວມມື | ເຮັດວຽກປະສານງານກັນເພື່ອໃຫ້ໄດ້ຮັບຄວາມສຳເຣັດໃນຈຸດປະສົງອັນດຽວກັນ, ໃຫ້ຄວາມອູ້ມຊູແກ່ຄົນອື່ນແລະເຂົ້າຮ່ວມໃນການແກ້ໄຂຂໍ້ຂັດແຍ້ງໂດຍວິທີສັນຕິ. |
| ການປະກອບສ່ວນ | ເປັນບຸກຄົນແລະເປັນພາກສ່ວນຂອງກຸ່ມ ທີ່ມີຄວາມຂຍັນຂັນແຂງແລະໝັ່ນພຽນເຮັດວຽກ, ມີຄວາມພາກພູມ ໃຈແລະປະກອບສ່ວນໃນການສ້າງສາຄວາມສົມບູນຮັ່ງມີດ້ານເສຖກິດແລະສັງຄົມຂອງຊູມຊົນແລະປະເທດຊາດ. |
| ຄວາມຫ່ວງໃຍ | ຫ່ວງໃຍຕໍ່ຄວາມຢູ່ດີກິນດີຂອງຕົນເອງແລະຂອງຄົນອື່ນ, ສະແດງຄວາມເຂົ້າອົກເຂົ້າໃຈແລະປະພຶດຕໍ່ຄົນອື່ນດ້ວຍຄວາມເຫັນອົກເຫັນໃຈ. |
| ຄວາມຍຸຕິທັມ | ຖືເປັນພາຣະກິດຂອງຕົນຕໍ່ຫຼັກຄວາມຍຸຕິທັມໃນສັງຄົມແລະຄັດຄ້ານສິ່ງທີ່ເປັນອະຄະຕິ, ຄວາມບໍ່ຊື່ສັດ ແລະ ຄວາມບໍ່ຍຸຕິທັມ. |
| ປະຊາທິປະໄຕ | ຍອມຮັບແລະສົ່ງເສີມສິດທິ, ອິສຣະພາບແລະໜ້າທີ່ຄວາມຮັບຜິດຊອບໃນການເປັນພົລເມືອງອອສເຕຣລຽນຄົນນຶ່ງຂອງຕົນ. |